# ວຽກກຸ່ມ: ສົນທະນາກ່ຽວກັບຮ່າງຂໍ້ສະເໜີແນະ

## ກຸ່ມ 4

### ຊຸດຂໍ້ສະເໜີແນະທີ 2: ສອດແຊກ GRP ເຂົ້າໃນຫຼັກສູດຂອງສະຖານການສ້າງຄູ, ແລະ ຮັບປະກັນໃຫ້ນຳໃຊ້ວິທີການນີ້ສະເໜີ ແລະ ສອນຕາມຈຸດປະສົງ ຂອງເນື້ອໃນຕົ້ນສະບັບ

**ຂໍ້ສະເໜີແນະ**

4. ປະເມີນຕາຕະລາງການສອນໃນປັດຈຸບັນ ແລະ ທົບທວນຄືນຫຼັກສູດທີ່ມີໃນປັດຈຸບັນຂອງສະຖານການສ້າງຄູ ເພື່ອສອດແຊກ ເນື້ອໃນ GRP ເຂົ້າໃນຫຼັກສູດບ່ອນທີ່ມີຄວາມກ່ຽວຂ້ອງ. ຕົວຢ່າງ, ການວາງແຜນການສອນ ແລະ ວິທີການສິດສອນທີ່ຄຳນຶງເຖິງຄວາມສະເໝີພາບທາງເພດ ຄວນຖືກເຊື່ອມສານເຂົ້າຢ່າງເປັນທຳມະຊາດໃນການຝຶກອົບຮົມໃນປັດຈຸບັນ ກ່ຽວກັບການວາງແຜນການສອນ, ທັກສະການສິດສອນ, ການປະເມີນການຮຽນຮູ້ ແລະ ການຈັດການຄຸ້ມຄອງຫ້ອງຮຽນ. ຊອກຫາໂອກາດ ທີ່ຈະບໍ່ເຮັດໃຫ້ຫຼັກສູດປັດຈຸບັນມີເນື້ອໃນຫຼາຍເກີນໄປ.
5. ເນື້ອໃນຫຼັກຂອງ GRP ທີ່ບໍ່ສອດຄ່ອງກັບຫຼັກສູດປັດຈຸບັນຂອງສະຖານການສ້າງຄູ ຄວນເພີ່ມໃສ່ເປັນເນື້ອໃນໃໝ່, ອາດຈະເປັນບົດຮຽນໃໝ່ໜຶ່ງໃນວິຊາໃດໜຶ່ງ ເພື່ອໃຫ້ເນື້ອໃນນັ້ນໄດ້ຖືກສອນສະເໝີ. ຖ້າເປັນໄປໄດ້, ເນື້ອໃນຫຼັກຄວນຖືກສອນເປັນສ່ວນໜຶ່ງຂອງຫຼັກສູດພື້ນຖານພາກບັງຄັບສຳລັບນັກສຶກສາຄູ ປີທີ 1.
6. ທົບທວນ ແລະ ປັບປຸງ ຮ່າງແຜນການສອນມາດຕະຖານຂອງສະຖານການສ້າງຄູ ໃຫ້ນຳໃຊ້ຫຼັກການ ແລະ ວິທີການ GRP ໄດ້ດີຂຶ້ນ ໂດຍຮັບປະກັນວ່າແຜນການສອນມີຈຸດປະສົງການຮຽນຮູ້ທາງດ້ານອາລົມ-ສັງຄົມ ແລະ ມີກິດຈະກຳການຮຽນຮູ້ຮ່ວມກັນ. ນັກສຶກສາຄູ ຄວນໄດ້ຮັບການຝຶກອົບຮົມໃຫ້ສາມາດວາງແຜນການສອນແບບນີ້ໄດ້. ຮັບປະກັນໃຫ້ມີການທົບທວນແຜນການສອນຂອງຄູເປັນປົກກະຕິ ໂດຍຫົວໜ້າພະແນກວິຊາການທີ່ກ່ຽວຂ້ອງ.

**ຄຳຖາມ**

1. ຂໍ້ສະເໜີແນະມີຄວາມຈະແຈ້ງ, ເປັນແນວທາງປະຕິບັດ ແລະ ເປັນສິ່ງທີ່ສາມາດບັນລຸໄດ້ຫຼືບໍ່ ເພື່ອໃຫ້ມີຄວາມຄືບໜ້າໃນການບັນລຸເປົ້າໝາຍລວມຂອງການສ້າງຂີດຄວາມສາມາດໃຫ້ນັກສຶກສາຄູໃນການສອນທີ່ຄຳນຶງເຖິງຄວາມສະເໝີພາບທາງເພດ? ຖ້າບໍ່, ທ່ານຈະແນະນຳໃຫ້ປັບປຸງຫຍັງ?

- ສຳລັບຂໍ້4 ແລະ ຂໍ້6 ໂດຍລວມເຫັນດີ
- ສ່ວນຂໍ້ທີ 5: ເພີ່ມເຕີມ ຄວນຈັດເຂົ້າໃນຫຼັກສູດລາຍວິຊາ ໃນໝວດຄວາມຮູ້ທົ່ວໄປ ແບ່ງໃຫ້ 1-2 ໜ່ວຍກິດ (ໂຄງສ້າງຫຼັກສູດ) ພ້ອມທັງສະໜອງອຸປະກອນ ແລະ ຝຶກອົບຮົມຄູສອນໃຫ້ມີຄວາມຮູ້ຄວາມສາມາດ ເພື່ອສົ່ງເສີມໃຫ້ຫຼັກສູດບັນລຸຕາມຈຸດປະສົງ ແລະ ເປົ້າໝາຍ

2. ມີຂໍ້ສະເໜີແນະໃດທີ່ທ່ານຈະຕັດອອກບໍ່? ຂໍ້ໃດ/ຍ້ອນຫຍັງ?

3. ມີຂໍ້ສະເໜີແນະໃດທີ່ຍັງຂາດບໍ່? ຄວນຈະຕື່ມຫຍັງ?

ເຖິງແມ່ນວ່າຂໍ້ສະເໜີແນະທີ່ໄດ້ກ່າວມາຂ້າງຕົ້ນນັ້ນມີຄວາມຄືບຖ້ວນໃນລະດັບໜຶ່ງ, ແຕ່ເພື່ອໃຫ້ການສ້າງຂີດຄວາມສາມາດໃຫ້ນັກສຶກສາຄູໃນການສອນທີ່ຄຳນຶງເຖິງຄວາມສະເໝີພາບທາງເພດມີຄວາມເຂັ້ມ ແຂງ ແລະ ຍືນຍົງຫຼາຍຂຶ້ນ, ກຸ່ມພວກເຮົາຄິດວ່າຍັງມີບາງຂໍ້ສະເໜີແນະທີ່ຄວນຈະຕື່ມເຂົ້າໄປ, ຄື:

1. ການສ້າງ ຄວາມເຂັ້ມແຂງ ໃຫ້ຄູອາຈານໃນສະຖາບັນການສ້າງຄູ (ການຝຶກອົບຮົມ ແລະ ພັດທະນາຄູອາຈານ, ການສ້າງຊຸມຊົນ ການ ຮຽນຮູ້ Professional Learning Community: PLC).

2. ການສ້າງສະພາບແວດລ້ອມ ການຮຽນຮູ້ທີ່ສົ່ງເສີມຄວາມສະເໝີພາບທາງເພດໃນສະຖາບັນການສ້າງຄູ (ການທົບທວນນະໂຍບາຍ ແລະ ລະບຽບການ, ການສ້າງວັດທະນະທຳທີ່ເຄົາລົບ ແລະ ເທົ່າທຽມ, ການຈັດກິດຈະກຳສົ່ງເສີມຄວາມສະເໝີ ພາບທາງເພດ).

3. ການຕິດຕາມ ແລະ ປະເມີນຜົນຢ່າງເປັນລະບົບ (ການກຳນົດຕົວຊີ້ວັດທີ່ຊັດເຈນ, ການເກັບກຳຂໍ້ມູນຢ່າງເປັນປົກກະຕິ, ການວິເຄາະ ແລະ ນຳໃຊ້ຂໍ້ມູນເພື່ອປັບປຸງໃຫ້ສອດຄ່ອງກັບສະພາບຄວາມເປັນ)

4. ໃຜ ຫຼື ພາກສ່ວນໃດທີ່ເໝາະສົມທີ່ສຸດທີ່ຈະນຳຂໍ້ສະເໜີແນະເຫຼົ່ານີ້ໄປຈັດຕັ້ງປະຕິບັດ?

**ກະຊວງສຶກສາທິການ ແລະ ກິລາ (ສສກ)** ມີຄວາມເໝາະສົມທີ່ສຸດທີ່ຈະເປັນຜູ້ລິເລີ່ມ ແລະ ນຳພາໃນລະດັບນະໂຍບາຍ, ແຕ່ **ສະຖາບັນການສ້າງຄູ** ແລະ **ຄູອາຈານ** ແມ່ນພາກສ່ວນຫຼັກໃນການຈັດຕັ້ງປະຕິບັດຕົວຈິງ. ການຮ່ວມມືກັນຢ່າງໃກ້ຊິດລະຫວ່າງທັງສາມພາກສ່ວນນີ້, ພ້ອມກັບການມີສ່ວນຮ່ວມຂອງພາກສ່ວນອື່ນໆທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ: **ນັກສຶກສາຄູ, ຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງ, ອົງການ UNESCO ຫຼື ອົງຈັດຕັ້ງອື່ນ ໆ ທີ່ກ່ຽວຂ້ອງ** ຈະຮັບປະກັນວ່າຂໍ້ສະເໜີແນະເຫຼົ່ານີ້ຖືກນຳໄປຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ສ້າງຜົນກະທົບທີ່ຍືນຍົງຕໍ່ການສ້າງຄູທີ່ຄຳນຶງເຖິງຄວາມສະເໝີພາບທາງເພດໃນ ສປປ ລາວ.